**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນະຄອນຫຼວງວຽງຈັນ

ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ..096......./ພປທສ

ວັນທີ..28 ກຸມພາ 2019

## ແຈ້ງການ

**ຮຽນ:** ບັນດາທ່ານເຈົ້າເມືອງ, ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ, ຫົວໜ້າຫ້ອງການໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ ເມືອງ ຈັນທະບູລີ ແລະ ເມືອງ ສີສັດຕະນາກ, ນາຍບ້ານ ແລະ ຂະແໜງການທີ່ກ່ຽວຂ້ອງທຸກພາກສ່ວນ ທີ່ນັບຖື.

**ເລື່ອງ:** ການສືບຕໍ່ພິຈາລະນາອອກອະນຸຍາດດຳເນີນກິດຈະການໃຫ້ບໍລິການອິນເຕີເນັດກາເຟ ປະເພດ 1 ຢູ່ ນະຄອນຫຼວງວຽງຈັນ.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 3133/ປທສ, ລົງວັນທີ 13 ຕຸລາ 2017 ວ່າດ້ວຍການຈັດຕັ້ງເຄື່ອນໄຫວຂອງພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງວຽງຈັນ.
- ອີງຕາມ ການຄົ້ນຄວ້າ ແລະ ຕົກລົງເຫັນດີເປັນເອກະພາບຂອງ ກົມໄອຊີທີ ກະຊວງ ປທສ ຄັ້ງວັນທີ 26 ກຸມພາ 2019 ແລະ ການຕົກລົງເຫັນດີເປັນເອກະພາບກັນຂອງຄະນະພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ນະຄອນຫຼວງວຽງຈັນ ຄັ້ງວັນທີ 08 ກຸມພາ 2019.

ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ນະຄອນຫຼວງວຽງຈັນ ຂໍຖືເປັນກຽດແຈ້ງມາຍັງທ່ານທຸກພາກສ່ວນຊາບວ່າ: ນັບແຕ່ວັນທີ 1 ມີນາ 2019 ເປັນຕົ້ນໄປຈະໄດ້ເລີ່ມສືບຕໍ່ພິຈາລະນາອອກອະນຸຍາດການບໍລິການອິນເຕີເນັດກາເຟ ປະເພດ 1 ແລະ ຍົກເລີກແຈ້ງການສະບັບເລກທີ 482/ປທສ, ລົງວັນທີ 28 ສິງຫາ 2018 ແຕ່ໃນການເຮັດຕົວຈິງແມ່ນຈະໄດ້ປະຕິບັດຕາມການແນະນຳຂອງກອງປະຊຸມຄັ້ງວັນທີ 30 ມັງກອນ 2019 ຢູ່ ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ, ໝາຍຄວາມວ່າໃຫ້ໄປຈົດທະບຽນການຄ້າກ່ອນ ແລ້ວຈຶ່ງມາຂໍອະນຸຍາດນຳພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ນະຄອນຫຼວງວຽງຈັນ.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງການມາຍັງບັນດາທ່ານເພື່ອຮັບຊາບ.

**ຫົວໜ້າພະແນກ**

ພະແນກ
ໄປສະນີ,ໂທລະຄົມມະນາຄົມ
ແລະການສື່ສານ
ນະຄອນຫລວງວຽງຈັນ

**ສີດອນ ອ່ອນສີພັນລາ**